**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 20 ມິຖຸນາ 2021 (06-20-2021)**

---

## ບໍ່ມີການປະນີປະນອມເມື່ອເວົ້າເຖິງຄວາມຈິງ.

*ແມ່ນສິນຄ້າແນວໃດທີ່ທ່ານບໍ່ມີຄວາມປາຖະໜາທີ່ຈະຍອມອະນຸໂລມ?*

**ຈຸດສຳຄັນໃນບົດຮຽນ:** ເມື່ອເວົ້າເຖິງຄວາມຈິງໃນພຣະຄັມພີກ່ຽວກັບພຣະຄຣິດ, ບໍ່ມີທີ່ວ່າງສຳລັບການປະນີປະນອມ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໂຕກະປອມຫຼາຍສີ ຄາເມລອນ (Chameleons) ແມ່ນສັດນ້ອຍໆທີ່ມີຊີວິດທີ່ໜ້າສົນໃຈ. ຖ້າທ່ານເອົາໂຕກະປອມນີ້ໃສ່ໃນກະປ໋ອງທີ່ມີຫຍ້າສີຂຽວ, ມັນກໍ່ຈະເລີ່ມກາຍເປັນສີຂຽວ. ຖ້າທ່ານຕື່ມໝາກໄມ້ປ່າເມັດສີແດງ, ມັນກໍ່ຈະເລີ່ມຕົ້ນທີ່ຈະມີສີຂອງໝາກໄມ້ປ່າເມັດສີແດງນັ້ນ. <u>ໂຕກະປອມປ່ຽນສີເພື່ອເຂົ້າກັບສະພາບ</u>. ມັນແມ່ນວິທີການຂອງພວກມັນໃນການປັບຕົວເຂົ້າກັບສະພາບແວດລ້ອມຂອງພວກມັນ. ພວກມັນຍັງຈະປ່ຽນສີເພື່ອໃຫ້ຄວາມອົບອຸ່ນຫຼືເຮັດໃຫ້ເຢັນລົງ, ຫຼືສື່ສານຄວາມຢ້ານກົວຫລືຄວາມໂກດແຄ້ນ. ອີກເທື່ອນຶ່ງ, ນີ້ແມ່ນວິທີການປັບຕົວເຂົ້າກັບສະພາບແວດລ້ອມຂອງພວກມັນ.

*<u>ມີຄົນບາງຈຳພວກເປັນເໝືອນໂຕກະປອມຫຼາຍສີ</u>*. ໃນສະຖານະການຫຼືສະພາບແວດລ້ອມໃດໆກໍຕາມທີ່ພວກເຂົາເຈົ້າຕົກຢູ່, ພວກເຂົາເຈົ້າປ່ຽນແປງຕາມສະພາບແລະ "ເອົາຕາມສີນັ້ນ" ອີງຕາມສະພາບແວດລ້ອມ. ຄວາມນຶກຄິດ <u>ແລະ</u>ການປະພຶດຂອງພວກເຂົາເຈົ້າປ່ຽນແປງເພື່ອໃຫ້ເຂົ້າກັບສະພາບ<u>ແລະ</u>ໃຫ້ເບິ່ງຄືກັນກັບໂລກອ້ອມຮອບຕົວຂອງພວກເຂົາເຈົ້າ. ສຳລັບບັນດາຜູ້ຕິດຕາມພຣະຄຣິດ, <u>ສີທີ່ແທ້ຈິງຂອງພວກເຮົາ</u> ບໍ່ສົມຄວນທີ່ຈະຖືກປະນີປະນອມ. ພວກເຮົາໄດ້ຖືກຮຽກເອີ້ນໃຫ້ດຳເນີນຊີວິດທີ່ອຸທິດຕົນຕໍ່ພຣະຄຣິດແລະ**<u>ບໍ່ຕ້ອງປະນີປະນອມຄວາມຈິງວ່າພຣະອົງແມ່ນໃຜແລະພວກເຮົາແມ່ນໃຜໃນພຣະຄຣິດ</u>**.

ຄຣິສຕະຈັກແຫ່ງເມືອງເປຄາໂມ (Pergamum) ໄດ້ປະນີປະນອມໃນດ້ານຄວາມເຊື່ອໃນອົງພຣະຄຣິດຂອງພວກເຂົາເຈົ້າໂດຍການ "**ປ່ຽນສີຂອງພວກເຂົາເຈົ້າ**" ແລະກັບກາຍມາເປັນເໝືອນດັ່ງບັນດາຜູ້ທີ່ຢູ່ອ້ອມຮອບຕົວຂອງພວກເຂົາເຈົ້າ. **ດ້ວຍເຫດນີ້ເອງ, ອົງພຣະຄຣິດໄດ້ຊົງຕຳໜິຕິຕຽນພວກເຂົາເຈົ້າ.**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ພຣະນິມິດ 2:12-13</u>

*12 "ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງເປຄາໂມວ່າ, 'ພຣະອົງຜູ້ຊົງຖືພຣະແສງສອງຄົມນັ້ນຊົງ*
*ກ່າວດັ່ງນີ້ວ່າ: 13 "ເຮົາຮູ້ຈັກທີ່ຢູ່ຂອງເຈົ້າ ຮູ້ວ່າທີ່ນັ້ນເປັນບັນລັງຂອງຊາຕານ ເຈົ້າຍັງຍຶດຖືນາມຂອງເຮົາໄວ້ໝັ້ນ*
*ແລະບໍ່ໄດ້ປະຕິເສດຄວາມເຊື່ອໃນເຮົາ ແມ່ນວ່າໃນເວລາທີ່ອັນຕິປາຜູ້ເປັນພະຍານທີ່ສັດຊື່ຂອງເຮົາ ໄດ້ຖືກຂ້າເສັຽ*
*ໃນຖ້າມກາງພວກເຈົ້າໃນບ່ອນທີ່ຊາຕານຢູ່ກໍຕາມ.*

ຖ້ອຍຄຳທີສາມຂອງພຣະເຢຊູແມ່ນເພື່ອຄຣິສຕະຈັກເມືອງເປຄາໂມ. ເມືອງເປຄາໂມຕັ້ງຢູ່ທາງທິດເໜືອຂອງເມືອງເອເຟໂຊແລະເມືອງຊະມີນາຊຶ່ງຕັ້ງຢູ່ປະມານ 15 ໄມລ໌ໃນພາກພື້ນດິນຈາກທະເລເອຈີນ (Aegean Sea). ເມືອງນີ້ມີພົລ

ເມືອງປະມານນຶ່ງແສນຫົກໝື່ນຄົນ ແມ່ນສູນກາງທາງສາສນາແລະວັທນະທັມແຫ່ງສາສນາ. ໃນຖານະທີ່ເປັນສູນກາງທາງວັທນະທັມ, ບາງຄົນຄາດຄະເນວ່າເມືອງເປຄາໂມມີເຈັ້ຍແລະຂົນສັດຊຶ່ງໄດ້ບັນທຶກເອກສານໄວ້ປະມານຈຳນວນສອງແສນຊິ້ນໃນຫໍສມຸດ. ໃນຖານະທີ່ເປັນສູນກາງທາງສາສນາ, ເມືອງເປຄາໂມເປັນສະຖານທີ່ໆບັນຈຸວິຫານສີ່ແຫ່ງຂອງບັນດາຊາວຕ່າງດ້າວ: **1.** ວິຫານຂອງອາເທນາ (Athena)-ພຣະເຈົ້າແຫ່ງປັນຍາແລະສິລປະ; **2.** ວິຫານຂອງໄດໂອນີຊັສ (Dionysus)-ພຣະເຈົ້າແຫ່ງເຫຼົ້າອະງຸ່ນແລະຄວາມປິຕິຍິນດີ; **3.** ວິຫານຂອງຊຸສ (Zeus)-ພຣະເຈົ້າແຫ່ງສວັນແລະພໍ່ຂອງພຣະເຈົ້າທັງປວງ; ແລະ **4.** ແທ່ນບູຊາແຫ່ງແອສເຄລປີອາສ (Asclepius)-ພຣະເຈົ້າແຫ່ງແພດທະສາດ.

ໃນລະຍະມະຫາຈັກພັດໂຣມັນ, ເມືອງເປຄາໂມໄດ້ຖືກມອບສິດອຳນາດທີ່ຫາຍາກໃນການຈັດການໆລົງໂທດປະຫານຊີວິດຊຶ່ງມີສັນຍາລັກໂດຍຮູບດາບ. ເຖິງຄຣິສຕະຈັກເມືອງເປຄາໂມ, ພຣະເຢຊູຊົງເຮັດໃຫ້ແຈ່ມແຈ້ງວ່າພຣະອົງນັ້ນລະເປັນອົງຜູ້ຊົງມີອຳນາດໃນການພິພາກສາໂດຍຊົງລະບຸພຣະອົງເອງວ່າ: *"ພຣະອົງຜູ້ຊົງຖືພຣະແສງສອງຄົມ"* (ຂໍ້ 12). ເມື່ອອັຄສາວົກໂຢຮັນໄດ້ເຫັນພຣະເຢຊູໃນລະຫວ່າງນິມິດເບື້ອງຕົ້ນຂອງລາວ, ເພິ່ນໄດ້ບັນລະຍາຍ "ມີພຣະແສງສອງຄົມອອກມາຈາກພຣະໂອດ ແລະພຣະພັກຂອງພຣະອົງເໝືອນດັ່ງດວງອາທິດທີ່ສ່ອງແສງກ້າ." ປະກອບດ້ວຍຊີວິດແລະຣິດເດດ, ຄົມກວ່າດາບສອງຄົມທຸກດວງແທງຊອດເຖິງຈິດໃຈແລະວິນຍານຕລອດທັງຄໍ່ກະດູກແລະໄຂໃນກະດູກຕິດຕໍ່ກັນ *ຈຶ່ງສັງເກດຮູ້ຄວາມຄຶດແລະຄວາມມຸ້ງໝາຍໃນໃຈໄດ້*." (ຮຣ 4:12). **ໂດຍພຣະຄຳຂອງພຣະອົງ, ພຣະເຢຊູຊົງເປັນຜູ້ທີ່ຊົງຕັດສິນຢ່າງແທ້ຈິງ.**

ພຣະເຢຊູຊົງຮູ້ດີເມືອງທີ່ຄຣິສຕະຈັກນີ້ອາສັຍຢູ່. ພ້ອມກັບ 4 ວິຫານໃຫຍ່ທີ່ອຸທິດເພື່ອການນະມັສການຂອງຊາວຕ່າງດ້າວ, ຊາວເປຄາໂມສາມາດຖືກລະບຸວ່າ: "*ເປັນບັນລັງຂອງຊາຕານ*" (ຂໍ້ 13). ສູ່ວັທນະທັມອ້ອມຮອບພວກເຂົາເຈົ້າ, ພຣະເຢຊູໄດ້ເປັນແຕ່ພຽງນຶ່ງໃນທ່າມກາງພຣະທັງປວງ, ແຕ່ບັນດາຜູ້ທີ່ເຊື່ອເຫຼົ່ານີ້ໄດ້ຮັບຮູ້ວ່າພຣະນາມຂອງພຣະອົງໄດ້ຕັ້ງຢູ່ເໜືອນາມຂອງພຣະທັງປວງແລະຜ່ານທາງພຣະອົງເທົ່ານັ້ນ ຜູ້ໃດຜູ້ນຶ່ງສາມາດຖືກຮັບໄຖ່ໃຫ້ລອດພົ້ນໄດ້. ພວກເຂົາ(ບັນດາຜູ້ທີ່ເຊື່ອ)ຍຶດໝັ້ນກັບຄວາມຈິງພື້ນຖານກ່ຽວກັບພຣະຄຣິດແລະຈະບໍ່ປະຕິເສດຄວາມເຊື່ອຂອງພວກເຂົາເຈົ້າ.

ການກົດຂີ່ຂົ່ມເຫງຍັງສືບຕໍ່ມາຈົນເຖິງປັດຈຸບັນນີ້ຢູ່ໃນໂລກ. ບັນດາຜູ້ທີ່ເຊື່ອຫຼວງຫຼາຍ, ເໝືອນກັບຊາວແອນຕິປາສ(Antipas)ກຳລັງຢືນຍຶດໝັ້ນຢ່າງແຂງແຮງຢູ່ໃນຄວາມເຊື່ອຂອງພວກເຂົາເຈົ້າ-ເຖິງແມ່ນວ່ານັ້ນແມ່ນການຕາຍໂດຍເຫດຜົນຂອງອົງພຣະຄຣິດກໍຕາມ. ພວກເພິ່ນກຳລັງເປັນພະຍານທີ່ກ້າຫານຕໍ່ຜູ້ອື່ນໃນທ່າມກາງສິ່ງທີ່ຊາຕານໂຍນໃສ່ພວກເຂົາເຈົ້າ. ພວກເຮົາກໍຄືກັນ, ຈຳເປັນຕ້ອງຢືນຢູ່ກັບພຣະຄຣິດບໍ່ວ່າຈະເກີດຫຍັງຂຶ້ນແລະຖືກກຳນົດວ່າເປັນພະຍານທີ່ສັດຊື່ຂອງພຣະອົງ.

*ພະຍານທີ່ສັດຊື່(ຈົງຮັກພັກດີ)ມີລັກສະນະແບບໃດໃນທຸກວັນນີ້?*

## 2. <u>ພຣະນິມິດ 2:14-15</u>

*[14] ແຕ່ເຮົາມີຂໍ້ທີ່ຈະຕໍ່ວ່າເຈົ້າບາງຂໍ້ ທີ່ນັ້ນມີບາງຄົນໃນພວກເຈົ້າທີ່ຖືຕາມຄຳສອນຂອງບາລາອາມ ຜູ້ໄດ້ສອນໃຫ້ກະສັດບາລາກກໍ່ເຫດຕໍ່ໜ້າພວກອິສຣາເອນ ເພື່ອໃຫ້ເຂົາຫລົງຜິດ ຄືໃຫ້ເຂົາກິນຂອງທີ່ໄດ້ບູຊາແກ່ພຣະທຽມແລ້ວແລະໃຫ້ເຂົາລ່ວງຜິດຊາຍຍິງ. [15] ຢ່າງດຽວກັນໃນພວກເຈົ້າມີບາງຄົນທີ່ໄດ້ຖືຕາມຄຳສອນແຫ່ງພວກນີໂກລາຍເຕ.*

ເຖິງແມ່ນວ່າພຣະເຢຊູໄດ້ຊົງຊົມເຊີຍການເປັນພະຍານຂອງພວກເຂົາເຈົ້າ, ແຕ່ພຣະອົງຍັງໄດ້ຊົງປະນາມ

(ກ່າວໂທດ) ການກະທຳຫຼາຍຢ່າງທີ່ໄດ້ເກີດຂຶ້ນຖ້າມກາງບັນດາຜູ້ຄົນໃນຄຣິສຕະຈັກແຫ່ງນີ້. ໃນຂະນະທີ່ຫຼາຍໆຄົນຍັງສັດຊື່ຕໍ່ພຣະເຈົ້າ, ຄົນອື່ນໆໄດ້ປະນີປະນອມຄວາມຈິງໂດຍການຜະສົມຜະສານຄວາມຈິງນັ້ນກັບຫຼັກຄຳສອນເທັດ(ບໍ່ຖືກຕ້ອງ). ພຣະເຢຊູຊົງໄດ້ກ່າວເຖິງຂໍ້ຜິດພາດສະເພາະ 2 ປະການດັ່ງຕໍ່ລົງໄປນີ້:

- **ຄຳສອນຂອງບາລາອາມ.** ໃນລະຍະທີ່ຊາວອິສຣາເອນໄດ້ຊັດເຊພະເນຈອນຢູ່ໃນຖິ່ນທຸລະກັນດານ, ກະສັດບາລັກຂອງໂມອາບໄດ້ມີຄວາມຢ້ານກົວຊາວອິສຣາເອນ. ຊາວອິສຣາເອນໄດ້ອອກມາຈາກຫຼາຍປີແຫ່ງການເປັນຂ້າທາດຂອງເອຢິບ, ແລະກະສັດບາລັກໄດ້ມີຄວາມຢ້ານກົວວ່າຊາວອິສຣາເອນຈະລຸກຮື້ຂຶ້ນແລະສັງຫານພຣະອົງແລະປະຊາຊົນຂອງພຣະອົງ. ກະສັດບາລັກໄດ້ສົ່ງຂ່າວສານໄປຫາພະບາລາອາມໃຫ້ສະເດັດມາແລະໃຫ້ຄຳສາບແຊ່ງຕໍ່ຊາວອິສຣາເອນເພື່ອວ່າກອງທັບຂອງພຣະອົງຈະໄດ້ສາມາດທຳລາຍພວກເຂົາເຈົ້າ.
- **ຄຳສອນຂອງນີໂກລາຍເຕ.** ເປັນທີ່ຮູ້ຈັກກັນໜ້ອຍກ່ຽວກັບນິກາຍນີ້, ແຕ່ປາກົດວ່າໄດ້ເຮັດໃຫ້ປະຊາຊົນດຳເນີນຊີວິດໂດຍບໍ່ມີກົດລະບຽບໃນການຕາມໃຈຕົນເອງ. ມັນອາດຈະຕິດພັນກັບການສິດສອນຂອງບາລາອາມຢ່າງໃກ້ຊິດ. ນີ້ຈະອະທິບາຍເຖິງຄວາມດຶງດູດຂອງການນັບຖືຮູບປັ້ນ(ຮູບໂຄຣົບ)ແລະການຜິດສິນທັມທາງເພດ. ເຊັ່ນດຽວກັບບັນດາຜູ້ທີ່ຕິດຕາມບາລາອາມ, ຊາວນີໂກລາຍເຕໄດ້ນຳພາປະຊາຊົນໃຫ້ປະນີປະນອມຄວາມຈິງທີ່ມາຈາກພຣະຄຣິດເທົ່ານັ້ນ.

*ຜົນສະທ້ອນຈາກການປະນີປະນອມເມື່ອເວົ້າເຖິງຄວາມຈິງໃນພຣະຄັມພີນັ້ນແມ່ນຫຍັງ?*

## 3. <u>ພຣະນິມິດ 2:16-17</u>

*16 ເຫດສັນນັ້ນຈົ່ງກັບໃຈເສັຽໃໝ່ຖ້າບໍ່ດັ່ງນັ້ນເຮົາຈະຮີບມາຫາເຈົ້າແລະຈະສູ້ຮົບກັບເຂົາເຫຼົ່ານັ້ນດ້ວຍດາບຈາກປາກຂອງເຮົາ. 17 ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫຼາຍ ເຮົາຈະໃຫ້ມານາທີ່ເຊື່ອງໄວ້ແກ່ຜູ້ທີ່ມີຊັຍຊະນະ ແລະຈະໃຫ້ຫີນຂາວແກ່ຜູ້ນັ້ນ ໃນຫີນນັ້ນມີຊື່ໃໝ່ຈາຣຶກໄວ້ ຊຶ່ງບໍ່ມີຜູ້ໃດຮູ້ນອກຈາກຜູ້ທີ່ຮັບເທົ່ານັ້ນ'."*

ພຣະເຢຊູໄດ້ຊົງສລຸບຖ້ອຍຄຳຂອງພຣະອົງຕໍ່ຄຣິສຕະຈັກເມືອງເປຄາໂມໂດຍຄຳເຕືອນຢ່າງເຂັ້ມງວດວ່າພວກເຂົາເຈົ້າຈຳເປັນຕ້ອງ <u>ຖິ້ມໃຈເກົ່າເອົາໃຈໃໝ່</u>! ພຣະອົງໄດ້ຊົງຮັບປະກັນແກ່ພວກເຂົາເຈົ້າວ່າການບໍ່ເຮັດເຊັ່ນນັ້ນຈະນຳຜົນສະທ້ອນທີ່ຮ້າຍແຮງມາໃຫ້. ພຣະເຢຊູໄດ້ຊົງສັນຍາວ່າຈະຕໍ່ສູ້ກັບຫຼັກຄຳສອນປອມແລະການປະຕິບັດທີ່ບໍ່ຖືກຕ້ອງພາຍໃນຄຣິສຕະຈັກ; ເຫດສະນັ້ນ ໃນນາມຜູ້ທີ່ຕິດຕາມພຣະອົງ, ພວກເຮົາຈຳເປັນຕ້ອງມຸ່ງໝັ້ນປະຕິບັດດັ່ງດຽວກັນຄື: **<u>ຕ້ອງຖິ້ມໃຈເກົ່າເອົາໃຈໃໝ່</u>**.

*ມີບາງວິທີທາງໃດທີ່ຄຣິສຕະຈັກຂອງທ່ານຄ້າຍຄືຄຣິສຕະຈັກຂອງເມືອງເປຄາໂມ (Pergamum)?*

ຖ້າຫາກຄຣິສຕະຈັກເມືອງເປຄາໂມປະຕິບັດເຊັ່ນນັ້ນ-ຖິ້ມໃຈເກົ່າເອົາໃຈໃໝ່ແລະຍືນຢູ່ເທິງຄວາມຈິງຂອງພຣະຄຣິດຢ່າງແນ່ວແນ່-ພວກເຂົາເຈົ້າຈະໄດ້ຮັບ<u>ລາງວັນ 2 ຢ່າງ</u>ດັ່ງຕໍ່ລົງໄປນີ້:

- **ມານາທີ່ໄດ້ຖືກຊຸກເຊື່ອງໄວ້.** ພຣະເຈົ້າໄດ້ຊົງປະທານມານາປະຈຳວັນໃນຖິ່ນທຸລະກັນດານແກ່ຊາວອິສຣາເອນເພື່ອລ້ຽງເກືອແລະເພື່ອຄວາມຢູ່ລອດ. ມານາປະຈຳວັນນັ້ນບາງຢ່າງໄດ້ຖືກ "<u>ຊຸກເຊື່ອງໄວ້</u>" ໃນໝໍ້ທອງຄຳຊຶ່ງໄດ້ຖືກບັນຈຸໄວ້ຢູ່ໃນຫີບຂອງພັນທະສັນຍາຊຶ່ງເປັນທີ່ລະລຶກແຫ່ງຂອງປະທານຂອງພຣະເຈົ້າແກ່ບັນດາຜູ້ທີ່ຕິດຕາມພຣະອົງດ້ວຍຄວາມຈົງຮັກພັກດີ(ດ້ວຍຄວາມສັດຊື່).

➢ **ຫີນສີຂາວ**. "ໝາກຫີນສີຂາວ" ສາມາດເຕືອນຄວາມຊົງຈຳແກ່ຄຣິສຕະຈັກກ່ຽວກັບຫີນສີຂາວທີ່ໄດ້ຖືກມອບໃຫ້ໂດຍຜູ້ພິພາກສາໃນຄວາມໝາຍວ່າພວກເພິ່ນໄດ້ພົບພໍ້ຜູ້ຕ້ອງຫາ(ຈຳເລີຍ)ນັ້ນບໍ່ມີຄວາມຜິດ(innocent). ຫຼືຫີນສີຂາວອາດຈະເປັນສັນຍາລັກຂອງຫີນສີຂາວທີ່ໃຊ້ເປັນບັດຜ່ານປະຕູເຂົ້າຊົມງານສາທາຣະນະ. ໃນທາງໃດກໍຕາມ, ຫີນສີຂາວກໍເໝືອນມານາປະຈຳວັນໃນລັກສະນະທີ່ມັນເປັນ <u>ສັນຍາລັກຂອງຊີວິດນິຣັນທີ່ພວກເຮົາໄດ້ຮັບໂດຍຜ່ານການຊົງອະພັຍໂທດຂອງອົງພຣະຄຣິດ</u>. ຢູ່ເທິງຫີນສີຂາວນີ້ຊື່ໃໝ່ຈະໄດ້ຖືກຈາຣຶກໄວ້ດັ່ງນີ້: **<u>ເມື່ອພວກເຮົາເຂົ້າມາຫາອົງພຣະຄຣິດ, ພວກເຮົາຈະໄດ້ຖືກມອບຊື່ໃໝ່ໃຫ້</u>.**

ໃນຂະນະທີ່ຈົດໝາຍນີ້ໄດ້ຊຽນເຖິງຄຣິສຕະຈັກເມືອງເປຄາໂມ, ມັນອາດຈະຊຽນເຖິງຄຣິສຕະຈັກຫຼາຍໆແຫ່ງຂອງພວກເຮົາໃນປະຈຸບັນເຊັ່ນດຽວກັນ. ມີຄຣິສຕະຈັກຫຼວງຫຼາຍໄດ້ຫັນໜ້າໜີຈາກຫຼັກຄຳສອນທີ່ຖືກຕ້ອງ ແລະຈາກຄວາມຈິງຂອງພຣະຄຳພຣະເຈົ້າ(ພຣະຄັມພີ). ຖ້າຫາກພວກເຮົາ**<u>ປະນີປະນອມ</u>**ໃນໜ້າທີ່ຂອງພວກເຮົາໃນ**<u>ຄວາມຈິງຂອງພຣະຄັມພີ</u>**, ແລ້ວພວກເຮົາຈະຢືນຢູ່ຖ້າມກາງອັນຕະລາຍທີ່ຈະໄດ້ຮັບການຊົງຕັດສິນ. ພຣະເຈົ້າຊົງໃຫ້ກຽດບັນດາຜູ້ຊຶ່ງ**<u>ບໍ່ຍອມປະນີປະນອມຄວາມເຊື່ອ</u>**, ແລະພວກເຮົາຈະເຮັດໄດ້ດີໃນການຢືນຢູ່ໂດຍປາສຈາກການປະນີປະນອມໃນຄຣິສຕະຈັກຂອງພວກເຮົາ ແລະເຊັ່ນດຽວກັນກັບໃນຊີວິດສ່ວນບຸກຄົນຂອງພວກເຮົາ.

*ເມື່ອໃດທ່ານໄດ້ເຫັນໃຜຜູ້ນຶ່ງປະຕິເສດໃນການປະນີປະນອມໃນຄວາມຈິງຂອງພຣະຄັມພີ?*

## ນຳໃຊ້ໃນຊີວິດ:

ທ່ານຈະຈັດການຢ່າງໃດກັບຄວາມຈິງໃນບົດຮຽນທີ່ຜ່ານມານີ້? ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

➢ **ຈົ່ງອະທິຖານ.** ພວກເຮົາກຳລັງດຳເນີນຊີວິດຢູ່ໃນວັທນະທັມຊຶ່ງເຕັມໄປດ້ວຍການປະນີປະນອມ. ຈົ່ງອະທິຖານທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງຊົງປະທານພະລັງໃຫ້ແກ່ທ່ານໃຫ້ມີກຳລັງຕໍ່ຕ້ານການປະນີປະນອມນັ້ນ. ຈົ່ງອະທິຖານເພື່ອຄຣິສຕະຈັກຂອງທ່ານເຊັ່ນດຽວກັນ: <u>ບໍ່ໃຫ້ມີການປະນີປະນອມໃນຄວາມຈິງຂອງພຣະຄັມພີ</u>.

➢ **ຈົ່ງສຳຫຼວດຕົນເອງ.** ຈົ່ງຈົດບັນຊີວິທີທາງທີ່ພວກຄົນຖືກທົດລອງໃຫ້ປະນີປະນອມໃນຄວາມເຊື່ອຂອງພວກເພິ່ນຫຼືຍອມຈຳນົນຕໍ່ຄຳສອນປອມ. ຈົ່ງສຳຫຼວດຕົນເອງເພື່ອກຳນົດວິທີການໃດວິທີການນຶ່ງທີ່ທ່ານ<u>ອາດໄດ້ປະນີປະນອມໄປແລ້ວ</u>ກັບການສອນປອມ.<u>*ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່*</u> ແລະ ຕັດສິນໃຈຢ່າງແນ່ວແນ່ທີ່ຈະຢືນຢູ່ຄຽງຂ້າງອົງພຣະຄຣິດ.

➢ **ຈົ່ງຜະເຊີນໜ້າ.** ຖ້າທ່ານຮູ້ຄົນທີ່ກຳລັງກ້າວໄປສູ່ການສິດສອນປອມຫຼືປະນີປະນອມ, ຈົ່ງປະເຊີນໜ້າກັບຄົນນັ້ນດ້ວຍຄວາມຮັກແລະຮຽກຮ້ອງໃຫ້ລາວກັບມາຫາຄວາມຈິງຂອງພຣະຄຣິດ. ຂໍໃຫ້ພຣະເຈົ້າຊົງໃຊ້ທ່ານໃນຊີວິດຂອງຄົນອື່ນ, ແຕ່ມັນເປັນສິ່ງສຳຄັນທີ່ຈະເຮັດແນວນັ້ນໂດຍ: "**ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍໃຈຮັກ...**" (ອຟຊ 4:15).

ພວກເຮົາບໍ່ມີຄວາມປາຖນາທີ່ຈະເປັນໂຕກະປອມຫຼາຍສີ ຄາເມລອນ(Chameleons)ໃນຊຸມຊົນຂອງພວກເຮົາ. ແຕ່ກົງກັນຂ້າມ, **<u>ຈົ່ງຕັດສິນໃຈວ່າທ່ານຈະຢືນຢູ່ກັບພຣະຄຣິດບໍ່ວ່າຈະເປັນແນວໃດກໍ່ຕາມແລະຈົ່ງຢືນຢູ່ຢ່າງເຂັ້ມແຂງ</u>.**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ http://lsbf.us ໂດຍ SSK**